ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1428 /ຫອຄ.ກຊອ
ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2020

# ແຈ້ງການ

ເຖິງ: - ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ;
- ຜູ້ປະກອບການສົ່ງອອກທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂອບສັນຍາການຄ້າດ້ານສິນຄ້າອາຊຽນ (Form D).

ເລື່ອງ: ການຈັດຕັ້ງປະຕິບັດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນຜ່ານທາງເອເລັກໂຕຣນິກ ຫຼື ATIGA e-Form D.

- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 27 ເມສາ 2010;

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານທາງເອເລັກໂຕຣນິກ (e-CO) ສະບັບເລກທີ 0369/ອຄ.ກຊອ, ລົງວັນທີ 28 ກຸມພາ 2016;

- ອີງຕາມ ແຜນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນຜ່ານທາງລະບົບເອເລັກໂຕຣນິກ (Electronic Certificate Form D in ASEAN Trade in goods Agreement: ATIGA e-Form D).

ເພື່ອເປັນການປະຕິບັດພັນທະຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA) ທີ່ຕິດພັນກັບວຽກງານຢັ້ງຢືນແຫຼ່ງກຳເນີດສິນຄ້າ, ປະຈຸບັນກົມການນຳເຂົ້າ ແລະ ສົ່ງອອກ (ກົມ ຂອ), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສຳເລັດການປັບປຸງລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານທາງເອເລັກໂຕຣນິກ (e-CO) ໃຫ້ສາມາດເຊື່ອມຕໍ່ເຂົ້າກັບລະບົບການແຈ້ງພາສີປະຕູດຽວຂອງອາຊຽນ (ASEAN Single Window: ASW) ແລະ ສາມາດຮັບ-ສົ່ງ, ແລກປ່ຽນຂໍ້ມູນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານ

ສິນຄ້າຂອງອາຊຽນ ຜ່ານທາງເອເລັກໂຕຣນິກ ຫຼື ATIGA e-Form D ກັບບັນດາປະເທດສະມາຊິກອາຊຽນ ຊຶ່ງໄດ້ທົດລອງນໍາໃຊ້ແຕ່ວັນທີ 23 ທັນວາ 2019 ເປັນຕົ້ນມາ ໂດຍຜ່ານເວັບໄຊ www.ecolao.gov.la. ຫ້ອງການ, ກະຊວງອຸດສາຫະກໍາ ແລະ ການຄ້າ ຈຶ່ງແຈ້ງມາຍັງ ທ່ານ ດັ່ງນີ້:

1. ໃຫ້ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ ຈັດສັນບຸກຄະລາກອນ ແລະ ອຸປະກອນຮັບໃຊ້ ເພື່ອຈັດຕັ້ງປະຕິບັດລະບົບ e-Form D;
2. ເພື່ອອໍານວຍຄວາມສະດວກ ຜູ້ປະກອບການທີ່ນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຂອງອາຊຽນ ສາມາດຫັນມານໍາໃຊ້ລະບົບ e-Form D ແທນການອອກ Form D ແບບປົກກະຕິ (Manual);
3. ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ເປັນເຈົ້າການສົມທົບຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ, ພາກສ່ວນກ່ຽວຂ້ອງ ເຜີຍແຜ່ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ຂໍ້ມູນເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ ເວັບໄຊ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ: www.laotradeportal.gov.la ຫຼື ສາມາດຕິດຕໍ່ພົວພັນ ພະແນກຄຸ້ມຄອງແຫຼ່ງກໍາເນີດສິນຄ້າ, ກົມການນໍາເຂົ້າ ແລະ ສົ່ງອອກ, ໂທ: +856 21 450 255, ອີເມວ: roodivision.laopdr@gmail.com.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກໍາ ແລະ ການຄ້າ
ຫ້ອງການ

ນ.ບານສະຕິ ເທບພະວົງ